# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດທີ 17 ສິງຫາ 2008 (08-17-2008)

---

## <u>ຊີວິດທີ່ເຕີບໃຫຍ່</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ເຮັບເຣີ 5:11-6:12

**<u>ຄໍາຖາມຊີວິດ:</u>** ເປັນຫຍັງທ່ານຈຶ່ງຈໍາເປັນຕ້ອງໃຫຍ່ຂຶ້ນໃນດ້ານຄວາມເຊື່ອ?

**<u>ພຣະຄັມພີແຫ່ງຄວາມຈິງ:</u>** ຄຣິສະຕຽນຈໍາເປັນຕ້ອງສືບຕໍ່ເຕີບໃຫຍ່ຂຶ້ນໃຫ້ເປັນຜູ້ໃຫຍ່ດ້ານຄວາມເຊື່ອ.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ໄດ້ຂຽນຂຶ້ນມາເພື່ອຊ່ອຍໃຫ້ທ່ານຄົ້ນຫາທາງທີ່ດີທີ່ສຸດຈາກພຣະເຈົ້າໃນຊີວິດປະຈໍາວັນຂອງທ່ານໂດຍ:

- ແທກເບິ່ງລະດັບຂັ້ນຄວາມເຊື່ອຂອງທ່ານວ່າຢູ່ໃດຂັ້ນໃດແລ້ວ, ກາຍເປັນຜູ້ທີ່ເຕີບໃຫຍ່ຂນາດໃດແລ້ວ;
- ພັດທະນາແຜນການຂອງຕົນເອງໃຫ້ກາຍເປັນຜູ້ຈະເຣີນເຕີບໃຫຍ່ໃນຄວາມເຊື່ອ.

ລູກຊາຍຂອງຂ້າພະເຈົ້າມັກຫລິ້ນກິລາ ໂຍນບານໃສ່ບ້ວງ ລາວໄດ້ຝຶກຫັດໂຍນໝາກບານໃສ່ບ້ວງທຸກມື້. ເມື່ອລາວໄປເຂົ້າໂຮງວິທະຍາລັຍ ລາວສູງພຽງແຕ່ 5.4 ເທົ່ານັ້ນ. ລາວກ່າວວ່າ, "ພໍ່ຂ້ອຍຢາກເປັນຄົນສູງກວ່ານີ້. ໃນປີຕໍ່ມາລາວສູງຂຶ້ນອີກ 4 ນີ້ວ. ໃນທີ່ສຸດລາວກໍໄດ້ດັ່ງຄວາມປາຖນາເປັນຄົນສູງແລະແຂງແຮງດີ.

ຄຣິສະຕຽນຄວນເປັນຄົນເຕີບໃຫຍ່ໃນຄວາມເຊື່ອ. ມີຫລາຍຄົນທີ່ຮັບເອົາອົງພຣະເຢຊູເປັນພຣະຜູ້ໂຜດໃຫ້ພົ້ນ ແຕ່ບໍ່ໄດ້ຈະເຣີນເຕີບໃຫຍ່ຂຶ້ນທາງດ້ານຈິດວິນຍານເລີຍ. ເປັນການເສົ້າໃຈໃນເມື່ອເຫັນຄຣິສະຕຽນເຊົາໃຫຍ່ ເປັນເໝືອນເດັກນ້ອຍບໍ່ຮຽນຍ່າງ, ບໍ່ຮຽນປາກ. ບົດຮຽນໃນວັນອາທິດນີ້ໄດ້ສອນວິທີແທກເບິ່ງລະດັບຂັ້ນຄວາມເຊື່ອຂອງທ່ານ ວ່າຢູ່ໃນຂັ້ນໃດແລ້ວ ແລະຮຽນພັດທະນາແຜນການຂອງຕົນໃຫ້ກາຍເປັນຜູ້ທີ່ເຕີບໃຫຍ່ໃນຄວາມເຊື່ອ.

## <u>ສຶກສາພຣະຄັມພີ</u>

### 1. <u>ຮູ້ວ່າອັນໃດດີແລະອັນໃດຊົ່ວ</u> (ເຮັບເຣີ 5:11-14)

ພວກຍິວມາເຊື່ອໃນພຣະຄຣິດແລ້ວບໍ່ໄດ້ຈະເຣີນເຕີບໃຫຍ່ຂຶ້ນໃນຄວາມເຊື່ອ. ພວກເຂົາພາກັນເຂົ້າໃຈຊ້າ ໆ, ບໍ່ສາມາດສິດສອນຄົນອື່ນໄດ້, ແລະພວກເຂົາຍັງຕ້ອງການຮຽນຫລັກຄວາມຈິງເບື້ອງຕົ້ນຂອງພຣະຄັມພີຢູ່.

ຜູ້ຂຽນເຫັນວ່າມີການຖົກຖຽງອັນສັບສົນ ເຖິງເຣື່ອງການເປັນປະໂຣຫິດຂອງອົງພຣະເຢຊູໃນບົດທີ່ຜ່ານມານັ້ນ. ຜູ້ຂຽນຍັງມີເຣື່ອງຍືດຍາວທີ່ຈະເວົ້າເຖິງ (ພວກເຮົາຈະໄດ້ເຫັນໃນບົດ 7). ຜູ້ຂຽນປ່ຽນຄວາມຄິດໃຫມ່ເພາະຜູ້ອ່ານຈົດໝາຍສະບັບນີ້(ພຣະທັມເຮັບເຣີ) ບໍ່ມີຄວາມສາມາດຈະເຂົ້າໃຈໄດ້ ຈຶ່ງເຮັດໃຫ້ຜູ້ຂຽນມີບັນຫາທີ່ຈະອະທິບາຍໃຫ້ພວກເຂົາເຂົ້າໃຈ.

ມີ 3 ທາງທີ່ຜູ້ອ່ານຈົດໝາຍນີ້ບໍ່ເຕີບໃຫຍ່ຂຶ້ນ. ນຶ່ງ, ພວກເຂົາຊ້າໃນການເຂົ້າໃຈ. ນັກປຣັສຍາຊຶ່ງເປັນຄົນກຣີກຊື່ວ່າ ປລາໂຕ ໄດ້ໃຊ້ຄໍາເວົ້າເປັນພາສາກຣີກທີ່ແປວ່າ ຊ້າ ມີຄວາມໝາຍວ່າ ເປັນນັກຮຽນຂີ້ຄ້ານ. ຖ້າເປັນນັກກິລາກໍເປັນຜູ້ບໍ່ມີຮ່າງກາຍສົມເປັນນັກກິລາ. ສອງ, ໃຊ້ເວລາຫລາຍປີຮຽນ ແຕ່ພວກເຂົາກໍຍັງບໍ່ສາມາດເປັນຄຣູສອນຄົນອື່ນໄດ້. **ພວກເຂົາຂາດຄວາມສາມາດທີ່ຈະເປັນຜູ້ນໍາ.** ສາມ, ພວກເຂົາບໍ່ສາມາດຕຽມຕົວສອນຄົນອື່ນໄດ້, **ແຕ່ພວກເຂົາຍັງຕ້ອງການຮຽນຈາກຄົນອື່ນເຖິງພື້ນຖານລັກຄວາມເຊື່ອຂອງພຣະເຈົ້າ.**

ອາຈານໂປໂລ ໄດ້ເອີ້ນເຂົາວ່າເປັນເດັກນ້ອຍໃນຄວາມເຊື່ອ. ພວກທ່ານຕ້ອງການນໍ້ານົມ ບໍ່ແມ່ນອາຫານແຂງ.

(1 ໂກຣິນໂທ 3:1-3). ໂປໂລໄດ້ເອີ້ນຄົນທີ່ມີຄວາມເຊື່ອຢ່າງນີ້ວ່າ "ເດັກອ່ອນໃນພຣະຄຣິດ" ເພິ່ນໄດ້ຕ້ອງຕິພວກເຂົາທີ່ບໍ່ໃຫຍ່ຂຶ້ນ ກິນແຕ່ນົມເທົ່ານັ້ນ. ຄຳວ່ານ້ຳນົມມີຄວາມໝາຍວ່າ ຫລັກພື້ນຖານເບື້ອງຕົ້ນຂອງຄວາມເຊື່ອ. ອາຫານແຂງ ໝາຍເຖິງລັກຄວາມເຊື່ອທີ່ເລິກ; ດັ່ງນັ້ນ, ຜູ້ຂຽນພຣະທັມເຫລັ້ມນີ້ຈຶ່ງກ່າວໄວ້ວ່າ **ອາຫານແຂງແມ່ນເພື່ອຜູ້ເປັນຄົນທີ່ໃຫຍ່ແລ້ວໃນຄວາມເຊື່ອ.**

ຜູ້ມີຄວາມເຊື່ອດ້ານວິນຍານແມ່ນຜູ້ມີຄວາມສາມາດຝຶກຫັດໃຫ້ຮູ້ຈັກສິ່ງດີ ແລະສິ່ງຊົ່ວ. ຜູ້ຂຽນໃຊ້ຄຳວ່າຝຶກຫັດຊຶ່ງແປວ່າ ການປະຕິບັດຕົວຈິງດ້ານຄວາມເຊື່ອ ເບິ່ງຄວາມຫມາຍໃນບ໊ອກຂ້າງລຸ່ມນີ້

**ການຝຶກຫັດ**

ຄຳວ່າ ການຝຶກຫັດ ເປັນຮາກຄຳສັບທີ່ໄດ້ມາຈາກພາສາກຣີກ *gumnazo*. ຄຳທີ່ວ່າ *gym* ແລະ*gymnasium* ແມ່ນໄດ້ມາຈາກ *gumnazo* ພາສາກຣີກຄຳນີ້ ຊຶ່ງມີຄວາມກ່ຽວພັນກັບຄຳວ່າ **ຝຶກຫັດແລະຝຶກອົບຮົມ.** ຜົນຈາກການຝຶກຫັດທາງດ້ານຈິດວິນຍານເຮັດໃຫ້ເຮົາສາມາດໃຈ້ແຍກໄດ້ຣະຫວ່າງຄວາມດີແລະຄວາມຊົ່ວ ອີງຕາມຄວາມຫມາຍນີ້ແມ່ນເວົ້າເຖິງການສອນຣະຫວ່າງຄວາມດີແລະຄວາມຊົ່ວ. ການເປັນຄຣິສຕຽນທີ່ໄດ້ຮັບການຝຶກອົບຮົມກໍແມ່ນຄຣິສຕຽນທີ່ເຕີບໃຫຍ່ແລ້ວ ລາວຮູ້ຈັກວ່າອັນໃດຈິງອັນໃດປອມ ແລະເປັນຜູ້ທີ່ດຳຣົງຊີວິດຢູ່ໃນຄວາມຈິງດ້ວຍຄວາມຫມັ້ນຄົງ.

ເຫມືອນກັບພວກນັກກິລາທີ່ຝຶກຫັດໃນຫ້ອງຝຶກຫັດການກິລາເພື່ອໃຫ້ສຸຂພາບຮ່າງກາຍຢູ່ໃນຄວາມເຂັ້ມແຂງ, ດັ່ງນັ້ນການ "ຝຶກຫັດດ້ານຈິດວິນຍານ" ກໍຄວນໃຫ້ມີຄວາມກ້ຳເກິ່ງກັນໃນທຸກດ້ານເຊັ່ນ ອ່ານພຣະຄັມພີ, ອະທິຖານ, ນະມັສການ, ແລະການຮັບໃຊ້.

ເມື່ອຄຣິສຕຽນບໍ່ໄດ້ມີການຝຶກຫັດຢ່າງໃດຢ່າງນຶ່ງທີ່ກ່າວມາຂ້າງເທິງນີ້ ຈິດວິນຍານຂອງເຂົາເຈົ້າກໍຈະມີຄວາມອ່ອນແອແລະເຊົາເຕີບໃຫຽ່ເຫມືອນດັ່ງ**ເດັກນ້ອຍ.** ແຕ່ຖ້າຄຣິສຕຽນຫາກມີການຝຶກຫັດປະຕິບັດດ້ານຄວາມເຊື່ອຂອງເຂົາເຈົ້າ ເຂົາເຈົ້າກໍຮຽນຮູ້ຈັກໃຈ້ແຍກລະຫວ່າງ**ຄວາມດີແລະຄວາມຊົ່ວ.** ສິ່ງທີ່ກ່າວມານີ້ໄດ້ອ້າງອີງເຖິງການຮູ້ຈັກໄຕ່ຕອງລະຫວ່າງຄວາມຖືກແລະຄວາມຜິດ ການສອນໃຫ້ປະພຶດປະຕິບັດທັງຄວາມຖືກແລະຄວາມຜິດ. ຄຣິສຕຽນຕ້ອງຈະເຣີນເຕີບໃຫຽ່ຂຶ້ນດ້ານຈິດວິນຍານເພື່ອຈະຮູ້ຈັກວ່າອັນໃດແມ່ນຄວາມດີຫລືຄວາມຊົ່ວ.

## ຂ. <u>ຈົ່ງເກີດຜົນແລະຮັບພຣະພອນຈາກພຣະເຈົ້າ</u> (ເຮັບເຣີ 6:1-8)

ຄຣິສຕຽນທີ່ເຕີບໃຫຽ່ແລ້ວຈະປະພຶດຕາມຄວາມເຊື່ອຂອງຕົນ. ຜູ້ຂຽນໄດ້ທ້າຊວນຜູ້ອ່ານໃຫ້ພິຈາຣະນາເບິ່ງຂໍ້ພຣະຄັມພີທີ່ມັກນຳມາໂຕ້ຖຽງກັນຢູ່ໃນພຣະຄັມພີໃຫມ່. ໂດຍສະເພາະຢ່າງຍິ່ງໃນຂໍ້ທີ 4 ນັ້ນເຫັນວ່າຕີຄວາມຫມາຍຍາກຫລາຍຊຶ່ງຖ້ອຍຄຳນັ້ນໄດ້ກ່າວວ່າ **ມັນເປັນໄປບໍ່ໄດ້ທີ່ຈະປ່ຽນແປງ**ຄົນເຫລົ່ານັ້ນໃຫ້**ຖິ້ມໃຈເກົ່າເອົາໃຈໃຫມ່ອີກ** (ແປຕາມປຶ້ມ) ເພາະວ່າຄົນເຫລົ່ານັ້ນໄດ້ຮັບຄວາມສະວ່າງມາເທື່ອນຶ່ງແລ້ວ ແລະໃນຂໍ້ທີ 6 ໄດ້ກ່າວເຖິງບັນດາຜູ້ທີ່ໄດ້**ຕົກເສັຽໄປແລ້ວ.** ດັ່ງທີ່ພວກເຮົາເຫັນໃນຂໍ້ທີ 9 ຜູ້ຂຽນບໍ່ຄິດວ່າຄົນຜູ້ນີ້ຈະສູນເສັຽຄວາມລອດພົ້ນຂອງລາວ.

ການຕີຄວາມຫມາຍທີ່ເປັນໄປໄດ້ໃນຂໍ້ທີ 9 ນັ້ນແມ່ນຜູ້ຂຽນໄດ້ເວົ້າເຖິງຄຣິສຕຽນຄົນຢິວຜູ້ຊຶ່ງຍັງນະມັສການພຣະເຈົ້າຢູ່ທີ່ພຣະວິຫານກັບບັນດາພວກຢິວທີ່ປະຕິເສດທີ່ຈະຮັບເອົາພຣະເຢຊູເປັນພຣະເມຊີອາ. ຜູ້ຂຽນອາດຈະຊຸກຍູ້ໃຫ້ຄຣິສຕຽນຢິວແຍກຕົວເປັນຄັ້ງສຸດທ້າຍຈາກຢິວທີ່ບໍ່ແມ່ນຄຣິສຕຽນ. ການຕີຄວາມຫມາຍນີ້ກໍເຫມາະສົມແລ້ວທີ່ໄດ້ເນັ້ນຫນັກໃສ່ພວກຢິວເຣື່ອງຄວາມຍິ່ງໃຫຽ່ຂອງພຣະເຢຊູທີ່ເຫນືອຄວາມຍິ່ງໃຫຽ່ຂອງບັນຍັດໂມເຊ.

ຜູ້ຂຽນໄດ້ເຕືອນວ່າເຖິງເວລາແລ້ວທີ່ຈະຕ້ອງປະຫລັກທັມເບື້ອງຕົ້ນໄວ້. ແລ້ວຜູ້ຂຽນໄດ້ກ່າວເຖິງຫລັກພື້ນຖານແຫ່ງຄວາມເຊື່ອ 6 ປະການ ທັງພວກຢິວແລະຄຣິສຕຽນເຫັນດີນຳກັນ: **ການກັບໃຈໃຫມ່ຈາກກິຈການທີ່ນຳໄປສູ່ຄວາມຕາຍ, ຄວາມເຊື່ອໃນພຣະເຈົ້າ, ຄຳສອນວ່າດ້ວຍພິທີຊຳຣະລ້າງ, ພິທີວາງມື, ການເປັນຄືນມາຈາກຕາຍ, ການພິພາກສາລົງໂທດເປັນນິດ.** ຈົ່ງສັງເກດເບິ່ງ ຍົກຕົວຢ່າງເຊັ່ນ ເພິ່ນໄດ້ກ່າວວ່າ **ຄວາມເຊື່ອໃນພຣະເຈົ້າ** ບໍ່ແມ່ນເຊື່ອໃນ

ພຣະຄຣິດ. ປະການທີສາມໃນຖ້ອຍຄຳທີ່ກ່າວມານີ້ບາງເທື່ອກໍແປວ່າ "ບັບຕິສະມາ" ທີ່ພວກຢິວກໍໄດ້ພາກັນປະຕິບັດເຫມືອນກັນ. ພາສາກຣີກໄດ້ອ້າງເຖິງພິທີຊຳຣະລ້າງຂອງພວກຢິວຕາມທີ່ກ່າວໄວ້ໃນພຣະທັມມາຣະໂກ 7:4 . ແທນທີ່ຈະປູພື້ນຖານ**ຫລັກທັມເບື້ອງຕົ້ນ**ອີກທີ່ພວກເຂົາເຈົ້າມີຢູ່ແລ້ວເຫມືອນກັບພວກທີ່ຖືສາສນາຢິວ(ຢູດາຍ); ຜູ້ຂຽນກ່າວວ່າເຖິງເວລາແລ້ວທີ່ຈະຕ້ອງ**ເຕີບໃຫຍ່ຂື້ນ**.

ເບື້ອງຫລັງທີ່ກ່າວມານີ້ໄດ້ຊ່ອຍພວກເຮົາໃຫ້ເຂົ້າໃຈພຣະຄຳໃນຂໍ້ທີ 4-6 ທີ່ກ່າວວ່າ **ເພາະວ່າຄົນເຫລົ່ານັ້ນໄດ້ຮັບຄວາມສະວ່າງມາເທື່ອນື່ງແລ້ວ** ໄດ້**ຊີມຣົດ**ແລະຮັບຜົນປໂຍດຈາກຂ່າວປະເສີດ**ແລະໄດ້ຕົກເສັຽໄປ**. ຜູ້ຂຽນອາດຈະກ່າວເຖິງພວກຢິວທີ່ບໍ່ເປັນຄຣິສຕຽນໃນໂຮງທັມສາລາ. ເຂົາເຈົ້າເຄີຍໄດ້ຍິນຂ່າວປະເສີດແລະ**ໄດ້ຊີມຣົດອັນດີແຫ່ງຖ້ອຍຄຳອັນດີຂອງພຣະເຈົ້າ**. ເຂົາເຈົ້າໄດ້ມາເຖິງຂອບຂອງຄວາມເຊື່ອແລະໄດ້ຕົກເສັຽໄປ ໄດ້ປະຕິເສດອົງພຣະຄຣິດ. ເຂົາເຈົ້າໄດ້**ຊີມຣົດ**ອັນດີແຕ່ບໍ່ເຄີຍໄດ້ກິນລົງໄປ. ຜູ້ຂຽນອາດຈະຊຸກຍູ້ພວກຢິວທີ່ເປັນຄຣິສຕຽນໃຫ້ປະພວກຢິວທີ່ບໍ່ເຊື່ອໄວ້ເບື້ອງຫລັງ.

ການຕີຄວາມຫມາຍອີກຢ່າງນື່ງໃນຖ້ອຍຄຳນີ້ແມ່ນໃຫ້ເບິ່ງໃນຂໍ້ທີ 4 ເພື່ອເປັນການອ້າງອີງເຖິງຄຣິສຕຽນທີ່ຖອຍຫລັງຄືຜູ້ທີ່ສູນເສັຽຜົນປໂຍດອັນດີໃນຂ່າວປະເສີດ(ເຖິງແມ່ນວ່າບໍ່ເສັຽຄວາມລອດພົ້ນ). ເຂົາເຈົ້າອາດຈະເປັນເຫມືອນຄົນອິສຣາເອນໃນເວລາທີ່ໂມເຊໄດ້ນຳອອກມາຈາກປະເທດອີຢິບ ເມື່ອນັກສືບ 12 ຄົນໄດ້ຖືກສົ່ງເຂົ້າໄປໃນການາອານ, ເຂົາເຈົ້າໄດ້ຊີມຣົດຫມາກຜົນທີ່ພວກນັກສືບເອົາມາ ແຕ່ຍັງປະຕິເສດທີ່ຈະເຂົ້າໄປໃນແຜ່ນດິນແຫ່ງຄຳສັນຍານັ້ນ. ເພາະວ່າເຂົາເຈົ້າໄດ້ຕົກເສັຽໄປຈາກການເຊື່ອໄວ້ວາງໃຈໃນພຣະເຈົ້າ ເຂົາເຈົ້າຈື່ງພາກັນຫລົງຢູ່ໃນປ່າກັນດານ (40 ປີ). ເຂົາເຈົ້າຍັງຄົງເປັນໄພ່ພົນຂອງພຣະເຈົ້າຢູ່ ແຕ່ໄດ້ສູນເສັຽໂອກາດທີ່ຈະເຮັດວຽກງານຮັບໃຊ້ພຣະເຈົ້າແລະໂອກາດທີ່ຜ່ານໄປແລ້ວນັ້ນຈະບໍ່ຫວນກັບຄືນມາອີກ.

ແຕ່ຢ່າງໃດກໍຕາມ ຜູ້ທີ່ຕີຄວາມຫມາຍພຣະຄັມພີຂໍ້ນີ້ ໄດ້ຕຳຫນິຢ່າງຮຸນແຮງຕໍ່ຄຣິສຕຽນທີ່ບໍ່ເຕີບໃຫຍ່. ສ່ວນຄຣິສຕຽນທີ່ກຳລັງກ້າວໄປສູ່ຄວາມເຕີບໃຫຍ່ກໍເຫມືອນ **ດິນທີ່ດູດຮັບເອົານ້ຳຝົນທີ່ຕົກໃສ່ຢູ່ເລື້ອຍໆ ແລະເກີດຜົນງອກຂື້ນ**. ຜູ້ທີ່ເຊື່ອເຫລົ່ານັ້ນ**ໄດ້ຮັບພຣະພອນຈາກພຣະເຈົ້າ**. ແຕ່ໃນທາງກົງກັນຂ້າ, ບັນດາຄຣິສຕຽນທີ່ບໍ່ຍອມເຕີບໃຫຍ່ຫລືຖອຍຄືນຫລັງໃນດ້ານຄວາມເຊື່ອກໍ**ເປັນເຫມືອນກັບດິນທີ່ເກີດສ້ຽນຫນາມກໍນັບວ່າບໍ່ມີຄ່າ**. ຜູ້ຂຽນໄດ້ເວົ້າວ່າ**ແລະເກືອບຈະຖືກຊິງປ້ອຍດ່າ ແລ້ວໃນທີ່ສຸດກໍຈະຖືກເຜົາໄຟເສັຽ**.

ຈຸດສຳຄັນນັ້ນແມ່ນພວກເຮົາມີທາງເລືອກວ່າຈະຕອບສນອງຕໍ່ອົງພຣະຄຣິດຢ່າງໃດ. ເຮົາສາມາດທີ່ຈະໄຕ່ຕອງພິຈາຣະນາທີ່ຈະເຕີບໃຫຽ່ຂື້ນທາງດ້ານຈິດວິນຍານ ເກີດຫມາກຜົນຢ່າງຫລວງຫລາຍແລະໄດ້ຮັບພຣະພອນ ຫລືບໍ່ຕ້ອງເກີດຫມາກຜົນແຕ່ຢ່າງໃດແລະໄດ້ຮັບການຊິງປ້ອຍດ່າ(ສອງທາງນີ້ ເຮົາສາມາດເລືອກເອົາທາງໃດທາງນື່ງ).

### 3. <u>ສະແດງຄວາມພຽນ:</u> ( ເຮັບເຣີ 6:9-12 )

ຫລັງຈາກທີ່ຜູ້ຂຽນໄດ້ໃຊ້ຄຳເວົ້າທີ່ຮຸນແຮງໃນພຣະຄັມພີຂໍ້ກ່ອນນັ້ນ ເພິ່ນໄດ້ປ່ຽນສຽງອ່ອນລົງໃນຂໍ້ທີ 9. ເປັນຄັ້ງທຳອິດພຽງຄັ້ງດຽວໃນປື້ມພຣະທັມເຫລັ້ມນີ້ ທີ່ເພິ່ນໄດ້ກ່າວກັບບັນດາຜູ້ອ່ານວ່າ **ພວກທີ່ຮັກເອີຍ**. ເພິ່ນໄດ້ໃຫ້ເຂົາເຈົ້າຮູ້ວ່າ ເຖິງແມ່ນ**ເພິ່ນໄດ້ເວົ້າດັ່ງນັ້ນ** ເພິ່ນກໍບໍ່ໄດ້ຄິດວ່າບັນດາຜູ້ອ່ານຈະຕົກຢູ່ໃນອັນຕະລາຍໂດຍສູນເສັຽຄວາມລອດພົ້ນ: **ພວກທ່ານນັ້ນມີສິ່ງທີ່ດີກວ່າທີ່ໄດ້ກ່າວມາ**. ເປັນຫຽັງເພິ່ນຈື່ງກ່າວວ່າເຂົາເຈົ້າລອດພົ້ນແລ້ວ? ເພິ່ນກ່າວເຊັ່ນນັ້ນກໍເພາະວ່າເຂົາເຈົ້າມີຊີວິດຢູ່ຢ່າງເກີດຜົນ **ນັ້ນກໍຄືສິ່ງທີ່ກ່ຽວກັບຄວາມພົ້ນ**. ເພິ່ນສັງເກດເຫັນ**ງານທີ່ເຂົາເຈົ້າໄດ້ເຮັດພ້ອມທັງຄວາມຮັກທີ່ສະແດງຕໍ່ພຣະນາມພຣະອົງ**(ພຣະເຢຊູ) ຄື**ການຮັບໃຊ້ໄພ່ພົນຂອງພຣະອົງ**. ເພິ່ນຍັງສັງເກດເຫັນອີກວ່າເຂົາເຈົ້າ**ຍັງຮັບໃຊ້ຢູ່**.

ໃນຂະນະທີ່ຍ້ອງຍໍການຮັບໃຊ້ຂອງເຂົາເຈົ້າ ຜູ້ຂຽນໄດ້ທ້າທາຍເຂົາເຈົ້າໃຫ້ສືບຕໍ່**ສະແດງໃຈຮ້ອນຮົນຢ່າງດຽວກັນຈົນເຖິງທີ່ສຸດ**. ເພິ່ນບໍ່ໄດ້ກ່າວວ່າການສ້າງຄວາມດີສາມາດແລກເອົາຄວາມລອດພົ້ນໄດ້ ແຕ່ເພິ່ນກ່າວວ່າການສ້າງຄວາມດີນັ້ນເປັນຜົນມາຈາກໄດ້ຮັບຄວາມລອດພົ້ນແລ້ວ. ການຮັບໃຊ້ຂອງຄຣິສຕຽນເປັນຫລັກຖານວ່າຜູ້ທີ່ເຊື່ອໄດ້ມຸ້ງຫນ້າໄປສູ່**ຄວາມຫວັງອັນສຸດທ້າຍຄືຄວາມສຳເຣັດ**.

ເພິ່ນໄດ້ຊຸກຍູ້ເຂົາເຈົ້າໃຫ້ສະແດງຕົນດ້ວຍການຮັບໃຊ້ເພາະວ່າໄດ້ຮັບຄວາມພົ້ນແລ້ວ, ບໍ່ແມ່ນເປັນຄົນຂີ້ຄ້ານ. ເຮົາຈະເຫັນຢ່າງແຈ່ມແຈ້ງວ່າຄວາມຂີ້ຄ້ານອາດຈະເກີດຂຶ້ນໄດ້ ເພາະເພິ່ນໄດ້ກ່າວໄວ້ເປັນພາສາກຣີກໃນບົດທີ 5:11. ແຕ່ບໍ່ເປັນດັ່ງທີ່ຫວັງໃຈໄວ້, ເພາະຍັງເຫັນວ່າມີຄຣິສຕຽນຂີ້ຄ້ານຈຳນວນຫລວງຫລາຍຢູ່. ທີ່ໂຮງຮຽນວິທຍາລັຍບັບຕິສທີ່ຂ້າພະເຈົ້າໄດ້ໄປຮຽນ ໄດ້ມີຄຳຖາມຕອນກິນເຂົ້າທ່ຽງທີ່ຫ້ອງອາຫານເກືອບທຸກຄາບວ່າ "ມື້ນີ້ ພວກທ່ານໄປນະມັສການໂບດໃດ?" ບັນດາຜູ້ທີ່ນອນຕື່ນສວາຍແລະຂາດໂບດຈະຕອບວ່າໄປ "ໂບດຕຽງສະປຣິງບັບຕິສ" (Bedspring Baptist) ເປັນໜ້າເສົ້າໃຈ, ໃນວັນຂອງອົງພຣະຜູ້ເປັນເຈົ້າວັນດຽວກັນນີ້ທີ່ອົງພຣະເຢຊູຟື້ນຈາກຄວາມຕາຍ ແຕ່ຄຣິສຕຽນຫລາຍຄົນບໍ່ໄດ້ຟື້ນ(ຕື່ນ)ຈາກຕຽງນອນຂອງຕົນ.

ຜູ້ຂຽນໄດ້ກ່າວວ່າ ແທນທີ່ຈະເປັນຄົນຂີ້ຄ້ານ ເຂົາເຈົ້າຄວນຈະເຮັດຕາມຜູ້ທີ່ມີຄວາມເຊື່ອທີ່ຍິ່ງໃຫຍ່ **ຄືຄົນເຫລົ່ານັ້ນທີ່ອາສັຍຄວາມເຊື່ອແລະຄວາມພຽນ**. ດັ່ງທີ່ພວກເຮົາອາດຈະເຫັນໃນພຣະທັມເຮັບເຣີບົດທີ 11 ບັນດາຜູ້ທີ່ມີຄວາມເຊື່ອທີ່ຍິ່ງໃຫຍ່ເຫລົ່ານີ້ໄດ້ບັນດົນໃຈໃຫ້ພວກເຮົາແຕ່ລະຄົນເຕີບໃຫຍ່ຂຶ້ນແລະມີຄວາມສັດຊື່.

## ບົດຮຽນໃນຊີວິດ

ພວກເຮົາຕ້ອງອອກກຳລັງກາຍເປັນປະຈຳເພື່ອໃຫ້ມີສຸຂພາບດີ ເຊັ່ນດຽວກັນຊີວິດຄຣິສຕຽນກໍຈຳເປັນຕ້ອງມີການອອກກຳລັງດ້ານຈິດວິນຍານເພື່ອຈະໄດ້ເຕີບໃຫຍ່ຂຶ້ນ. ການຝຶກອົບຮົມຈະຊ່ອຍພວກເຮົາໄດ້ 3 ຢ່າງດ້ວຍກັນຄື: 1)ຮູ້ດີຮູ້ຊົ່ວ 2)ເກີດຜົນແລະຮັບພຣະພອນ 3)ເຮັດດີເພື່ອເປັນຫລັກຖານວ່າໄດ້ລອດພົ້ນແລ້ວ.

ພວກເຮົາຕ້ອງກວດສຸຂພາບຮ່າງກາຍເປັນປະຈຳ, ແລະພວກເຮົາຍັງຈຳເປັນຕ້ອງສຳຣວດເບິ່ງສຸຂພາບດ້ານຈິດວິນຍານຂອງເຮົາເປັນປະຈຳເຫມືອນກັນ. ຈົ່ງຕອບຄຳຖາມດັ່ງຕໍ່ໄປນີ້:

1. ທ່ານອ່ານພຣະຄັມພີອາທິດນຶ່ງຈັກວັນ_____ ?
2. ທ່ານອະທິຖານ(ເຝົ້າດ່ຽວ) ອາທິດນຶ່ງຈັກວັນ_____?
3. ໃນເດືອນທີ່ມີ 4 ອາທິດ ທ່ານມານະມັສການຈັກເທື່ອ (ຈັກວັນອາທິດ)_____?
4. ທ່ານໄດ້ຮັບໃຊ້ຈັກຢ່າງພາຍໃນອາທິດນຶ່ງ(ເຊັ່ນການສອນ, ເບິ່ງແຍງຄົນເຈັບຫລືຜູ້ເຖົ້າ, ໃຫ້ອາຫານຄົນອຶດຫິວ, ຢ້ຽມຢາມຄົນເຈັບທີ່ໂຮງຫມໍ, ແບ່ງປັນຂ່າວປະເສີດ...) ______?

ຖ້າຕົວເລກຄຳຕອບໃນການຮັບໃຊ້ອັນໃດອັນນຶ່ງຂ້າງເທິງນີ້ຫາກຢູ່ຂັ້ນຕ່ຳ ນັ້ນໄດ້ຊີ້ໃຫ້ເຫັນວ່າສຸຂພາບດ້ານຈິດວິນຍານຂອງທ່ານອາດຈະຢູ່ໃນອັນຕະລາຍ ຖືງແມ່ນວ່າສຸຂພາບດ້ານຈິດວິນຍານຂອງທ່ານຢູ່ໃນຂັ້ນດີກໍຕາມ ມີທາງໃດອີກບໍ່ທີ່ທ່ານສາມາດທີ່ຈະເຕີບໃຫຍ່ຂຶ້ນໄດ້ອີກ? ທ່ານຄິດວ່າຈະເຮັດແນວໃດ ຈຶ່ງຈະເຕີບໃຫຍ່ໃນທາງນັ້ນໄດ້?

ອຸປຖັມໂດຍລາວຊາວເທີນບັບຕິສສັມພັນwww.lsbf.org.,by ps.